*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, [Fast Track], 232-240*
https://doi.org/10.69692/SUJMRD12(Fast track)232

# A Study on the Decision-Making of Students Enrolling at Luang Prabang Technical-Vocational College; Academic year 2025-2026

**Latikone CHANTHASITH[1], Vinath MEKTHANAVANH[2], Sengdao PHETHSOMBATH[3], Thongthiane VATHANAVONG[4], Sonephet SENGTHONG[5] And Souvankham LASY[6]**

*Master of Education and Development, Faculty of Education, Souphanouvong University.*

*[1]Correspondence Author: Latikone CHANTHASITH, Master student of Education and Development, Faculty of Education, Souphanouvong University.*
*Tel: +856 20 93815532, E-mail: latikonechanthasith@gmail.com*
*[2,3,4] Faculty of Education, Souphanouvong University*
*[5,6] Department of Administration and staff, Luang Prabang Technical-Vocational College*

**Article Info:**
**Submitted: June 03, 2026**
**Revised: June 07, 2026**
**Accepted: June 09, 2026**

## Abstract

This research investigated the decision-making of students enrolling at Luang Prabang Technical-Vocational College. The data collection conducted in quantitative research approach with a questionnaire. The sample including 243 students currently studying at the college in the academic year 2025-2026. The data were analyzed by SPSS version 21. Using descriptive statistics including mean ($\overline{X}$) and standard deviation (SD). The variables encompassed 4 aspects: (1) motivation to study, (2) institutional image and credibility, (3) personal capability, and (4) socio-economic factors.

The results revealed that the overall level of students' decision-making at Luang Prabang Technical-Vocational College was high ($\overline{X}$= 4.12, SD = 0.58). Considering to micro aspects, the results show that the motivation to study showed the highest mean score ($\overline{X}$= 4.35, SD =0,65), followed by the institutional image and credibility ($\overline{X}$ = 4.18, SD =0,60), whereas the personal capability and socio-economic factors were at a moderate level.

These findings prove that making a positive image and effectively advertising curriculum information are crucial factors in attracting students. So, the institution should focus on public relations activities, curriculum promotion, and the development of learning environment. These activities will enhance students' motivation to enroll. The findings also provide valuable fundamental information for the institution's policy brief and planning for sustainable student recruitment.

**Keywords**: Decision-making, Technical and Vocational Education, Educational Institution Selection

## 1. ພາກສະເໜີ

ໃນຍຸກໂລກາພິວັດ ແລະ ການປະຕິວັດອຸດສາຫະກຳ 4.0, ການສຶກສາເຕັກນິກ ແລະ ວິຊາຊີບ (Technical and Vocational Education and Training - TVET) ໄດ້ກາຍເປັນກົນໄກສຳຄັນໃນການສ້າງຊັບພະຍາກອນມະນຸດໃຫ້ມີທັກສະສີມືແຮງງານ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານ (UNESCO, 2022). ການສົ່ງເສີມໃຫ້ຄົນລຸ້ນໃໝ່ເຂົ້າຮຽນສາຍອາຊີວະ ແມ່ນຍຸດທະສາດຫຼັກໃນການຫຼຸດຜ່ອນອັດຕາການວ່າງງານ ແລະ ເພີ່ມຂີດຄວາມສາມາດໃນການແຂ່ງຂັນຂອງປະເທດ. ສຳລັບ ສປປ ລາວ ການພັດທະນາອາຊີວະສຶກສາເກີດຂຶ້ນຍ້ອນການຂະຫຍາຍຕົວຂອງໂຄງການອຸດສາຫະກຳ ແລະ ສົ່ງເສີມວິສາຫະກິດຂະໜາດນ້ອຍ-ກາງ, ລັດຖະບານໄດ້ໃຫ້ຄວາມ

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*http://creativecommons.org/licenses/by-nc-nd/4.0/

ສຳຄັນໃນການປະຕິຮູບການສຶກສາໂດຍເນັ້ນໃສ່ການປະຕິບັດຕົວຈິງຂອງຜູ້ຮຽນ, ມີການສະໜັບສະໜູນນະໂຍບາຍທຶນການສຶກສາ, ເບ້ຍລ້ຽງ ແລະ ຫໍພັກ ເຊິ່ງເຄີຍສົ່ງຜົນໃຫ້ຕົວເລກຜູ້ເຂົ້າຮຽນເພີ່ມຂຶ້ນຢ່າງຊັດເຈນ (ກົມອາຊີວະສຶກສາ, 2021)

ວິທະຍາໄລ ເຕັກນິກ-ວິຊາຊີບ ຫຼວງພະບາງ ເປັນສະຖາບັນການສຶກສາທີ່ສຳຄັນໃນເຂດພາກເໜືອ ທີ່ມີບົດບາດໃນການຜະລິດນັກເຕັກນິກວິຊາການ. ໂດຍຕອບສະໜອງໃຫ້ແກ່ການຂະຫຍາຍການເຂົ້າເຖິງອາຊີວະສຶກສາ, ແຜນງານການສະໜັບສະໜູນບັດທຶນ ແລະ ເບ້ຍລ້ຽງກໍໄດ້ຖືກຈັດຕັ້ງປະຕິບັດໂດຍຜ່ານໂຄງການຕ່າງໆ ໂດຍສະເພາະການສະໜອງຫໍພັກໃຫ້ແກ່ນັກສຶກສາ ເປັນອີກປັດໄຈໜຶ່ງທີ່ເຮັດໃຫ້ມີການເຂົ້າຮຽນເພີ່ມຂຶ້ນ, ໂດຍສະເພາະນັກຮຽນຍິງຈາກຊົນນະບົດ ແລະ ຊົນເຜົ່າ. ເຖິງຢ່າງໃດກໍຕາມ, ການຕັດສິນໃຈເຂົ້າຮຽນຂອງນັກຮຽນແມ່ນຂຶ້ນກັບຫຼາຍປັດໄຈ ເຊັ່ນ: ຄ່ານິຍົມຂອງສັງຄົມ, ສະພາບເສດຖະກິດຄອບຄົວ, ແລະ ສື່ການປະຊາສຳພັນຂອງສະຖາບັນ. ປັດໄຈສຳຄັນແມ່ນພັກ ແລະ ລັດຖະບານມີນະໂຍບາຍທີ່ຖືກຕ້ອງເພື່ອຕອບສະໜອງຄວາມຕ້ອງການ ແລະ ກຳລັງແຮງຂອງທ້ອງຖິ່ນ ແລະ ໃຫ້ຄວາມສຳຄັນຕໍ່ການພັດທະນາວຽກງານອາຊີວະສຶກສາຢູ່ສະເໝີ.

ການຕັດສິນໃຈເຂົ້າສຶກສາຕໍ່ຂອງນັກຮຽນ ແມ່ນຂະບວນການທີ່ຊັບຊ້ອນ ແລະ ກ່ຽວຂ້ອງກັບຫຼາຍປັດໄຈຮ່ວມກັນ. Kotler & Fox (1995) ໄດ້ອະທິບາຍຜ່ານທິດສະດີສ່ວນປະສົມການຕະຫຼາດການສຶກສາໄວ້ວ່າ ການຕັດສິນໃຈຂອງນັກຮຽນເກີດຈາກການປະເມີນຄຸນນະພາບຫຼັກສູດ, ຄ່າທຳນຽມ, ພາບພົດສະຖາບັນ ແລະ ສິ່ງອຳນວຍຄວາມສະດວກ. ພ້ອມກັນນີ້ໃນບໍລິບົດປັດຈຸບັນ 'ໃບປະກາດ' ອາດບໍ່ພຽງພໍ, ແຕ່ 'ທັກສະທີ່ຕະຫຼາດຕ້ອງການ' (Specific Skills) ຄືຕົວຕັດສິນໃຈຫຼັກ, (Marginson, 2019); ນອກຈາກນີ້, ປັດໄຈດ້ານສະພາບແວດລ້ອມ ແລະ ເຄື່ອງມືທີ່ທັນສະໄໝ ຍັງເປັນຕົວກຳນົດຄວາມໜ້າເຊື່ອຖືຂອງສະຖາບັນ (Tran, 2021) ແລະ ຂະນະທີ່ຜົນຕອບແທນດ້ານລາຍໄດ້ຫຼັງຮຽນຈົບກໍເປັນປັດໄຈສຳຄັນ, (Ahmad and Ashfaq, 2023) ພິເສດໃນຍຸກດິຈິຕອນ, Mustafa et al. (2020) ພົບວ່າ ການຮັບຮູ້ພາບພົດຜ່ານ (ສື່ອອນລາຍ ແລະ ການຕອບໂຕ້ (Reviews) ຂອງນັກສຶກສາຕົວຈິງ ແມ່ນມີອິດທິພົນຕໍ່ຄວາມເຊື່ອໝັ້ນຂອງຜູ້ຊົມໃຊ້ຫຼາຍກວ່າການໂຄສະນາແບບດັ້ງເດີມ. ສະພາບແວດລ້ອມ ແລະ ສິ່ງອຳນວຍຄວາມສະດວກໃນການຮຽນ-ການສອນ ມີສ່ວນສຳຄັນໃນການດຶງດູດຜູ້ຮຽນ (Chanthamanyvong et al., 2024).

ໃນການສຶກສາຄັ້ງນີ້, ໄດ້ນຳໃຊ້ທິດສະດີສ່ວນປະສົມການຕະຫຼາດ ແລະ ຂະບວນການຕັດສິນໃຈຂອງ Kotler ແລະ Fox (1995) ເປັນກອບແນວຄິດ, ເຊິ່ງໄດ້ລະບຸວ່າການຕັດສິນໃຈເຂົ້າສຶກສາຂອງນັກຮຽນບໍ່ໄດ້ຂຶ້ນກັບປັດໄຈໃດໜຶ່ງພຽງຢ່າງດຽວ ແລະ Marginson (2019) ທີ່ໄດ້ວິເຄາະວ່າ ໃນບໍລິບົດການສຶກສາສະໄໝໃໝ່, ເຖິງວ່າທິດສະດີທຶນມະນຸດ (Human Capital Theory) ຈະຍັງມີອິດທິພົນສູງໃນການອະທິບາຍວ່າການຮຽນຄືການລົງທຶນ, ແຕ່ທ່ານກໍໄດ້ຊີ້ໃຫ້ເຫັນປະເດັນສຳຄັນຄື: ໃນຍຸກປັດຈຸບັນ ພຽງແຕ່ 'ໃບປະກາດ' ອາດຈະບໍ່ພຽງພໍສຳລັບການເຂົ້າສູ່ຕະຫຼາດແຮງງານ, ແຕ່ 'ທັກສະທີ່ຕະຫຼາດຕ້ອງການແທ້ໆ' (Specific Skills) ຕ່າງຫາກຄືຕົວຕັດສິນມູນຄ່າຂອງບຸກຄົນ. ແຕ່ເປັນຜົນມາຈາກການປະເມີນສ່ວນປະສົມຕ່າງໆ ເຊັ່ນ: ຄຸນນະພາບຂອງຫຼັກສູດ, ຄ່າທຳນຽມການຮຽນ, ພາບພົດຂອງສະຖາບັນ ແລະ ສິ່ງອຳນວຍຄວາມສະດວກພາຍໃນວິທະຍາໄລ ເຕັກນິກ-ວິຊາຊີບ ຫຼວງພະບາງ. Mustafa et al, (2020) ສະເໜີວ່າ ໃນຍຸກດິຈິຕອນ, ການຕັດສິນໃຈຂອງນັກຮຽນແມ່ນຖືກຊັກຈູງໂດຍ "ການຮັບຮູ້ພາບພົດ" ທີ່ສະຖາບັນສ້າງຂຶ້ນຜ່ານສື່ online. ຂໍ້ມູນທີ່ວ່ອງໄວ, ການຕອບໂຕ້ ແລະ ຣີວິວ (Review) ຈາກຜູ້ຮຽນຕົວຈິງ ເຮັດໃຫ້ເກີດຄວາມເຊື່ອໝັ້ນ ເຊິ່ງເປັນປັດໄຈຕັດສິນໃຈທີ່ສຳຄັນກວ່າການໂຄສະນາແບບດັ້ງເດີມເພື່ອໃຫ້ຜູ້ຮຽນອາຊີວະສຶກສາມີຄວາມຮູ້ ຄວາມສາມາດ, ມີທັກສະອາຊີບຕາມສາຂາອາຊີບທີ່ຮຽນມາໄດ້ມາດຕະຖານສຳລັບສະໜອງລະບົບການຮຽນຮູ້, ເປີດໂອກາດໃຫ້ທຸກເພດທຸກໄວ, ດ້ວຍຄວາມສະເໝີພາບ ແລະ ເທົ່າທຽມກັນ, ສົ່ງເສີມ, ສະໜັບສະໜູນຜູ້ຮຽນ-ຜູ້ສອນໃຫ້ມີການສ້າງ ແລະ ພັດທະນານະວັດຕະກຳ ສິ່ງປະດິດ ໃໝ່ໆ ເພື່ອນຳໄປໃຊ້ໃນການພັດທະນາການຮຽນການສອນຂອງຕົນໃຫ້ເກີດປະສິດທິຜົນຕໍ່ກັບທ້ອງຖິ່ນ, ສັງຄົມ ແລະ ປະເທດຊາດ, ປົກປັກຮັກສາ ແລະ ເສີມຂະຫຍາຍສິລະປະ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດຂອງປະຊາຊົນ ຜູ້ສຳເລັດການສຶກສາມີຄວາມຮູ້ຄວາມສາມາດໃນການປະກອບອາຊີບ

ແບບຍືນຍົງກົງກັບຄວາມຕ້ອງການຂອງຕະຫຼາດແຮງງານ. ກົມການສຶກສາຊັ້ນສູງ (2020) ແລະ Ahmad and Ashfaq (2023) ໄດ້ສະເໜີວ່າ ນັກສຶກສາຈະເລືອກຮຽນໃນສິ່ງທີ່ເຂົາເຈົ້າເຫັນວ່າ "ຄຸ້ມຄ່າ" ທີ່ສຸດ ແລະ Tran (2021) ກໍ່ໄດ້ສະເໜີແນວຄິດວ່າ ສຳລັບການຮຽນສາຍວິຊາຊີບ, "ສິ່ງອຳນວຍຄວາມສະດວກທີ່ຈັບຕ້ອງໄດ້" ເຊັ່ນ: ເຄື່ອງຈັກ, ຫ້ອງທົດລອງ ແລະ ເຕັກໂນໂລຊີທີ່ທັນສະໄໝ ແມ່ນຕົວຊີ້ວັດຄຸນນະພາບອັນດັບໜຶ່ງ. ນັກສຶກສາໃຊ້ "ສະພາບແວດລ້ອມການຮຽນ" ເປັນເກນໃນການຕັດສິນໃຈ ເພາະເຂົາເຈົ້າເຊື່ອວ່າເຄື່ອງມືທີ່ດີຈະນຳໄປສູ່ທັກສະທີ່ດີ ແລະ ວຽກເຮັດງານທຳທີ່ດີ. ໂດຍສະເພາະປັດໄຈດ້ານເສດຖະກິດ-ສັງຄົມ ແລະ ໂອກາດໃນການສ້າງລາຍໄດ້ຫຼັງຈົບການສຶກສາ ແມ່ນຕົວແປຫຼັກ (Pongsitong, 2005); ຖ້າຫຼັກສູດສອດຄ່ອງກັບຕະຫຼາດ, ນັກສຶກສາຈະຍອມຮັບຄວາມສ່ຽງ ແລະ ຕັດສິນໃຈເຂົ້າຮຽນໂດຍບໍ່ລັງເລວິທະຍາໄລ ເຕັກນິກ-ວິຊາຊີບ ຫຼວງພະບາງ ມີບົດບາດສຳຄັນໃນການຜະລິດຊັບພະຍາກອນມະນຸດທີ່ມີທັກສະສະເພາະດ້ານເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານ.

ເຖິງຢ່າງໃດກໍຕາມ, ທ່າມກາງການສົ່ງເສີມດັ່ງກ່າວ ສາຍອາຊີວະສຶກສາພາກລັດ ກໍຍັງປະເຊີນກັບສິ່ງທ້າທາຍອັນໃຫຍ່ຫຼວງ ຄື ສະຖິຕິຜູ້ເຂົ້າຮຽນໄດ້ຫຼຸດລົງຢ່າງຕໍ່ເນື່ອງໃນໄລຍະຫຼັງ ການເຂົ້າຮຽນໃນສາຍອາຊີວະພາກລັດໃນທົ່ວປະເທດໄດ້ລຸດລົງຈາກ 37,005 ຄົນ ໃນສົກຮຽນ 2017-2018, ມາເປັນ 15,949 ຄົນ ໃນສົກຮຽນ 2023-2024 (ກະຊວງສຶກສາທິການ ແລະ ກິລາ, 2020); ບັນຫາດັ່ງກ່າວນີ້ ຍັງໄດ້ສົ່ງຜົນກະທົບໂດຍກົງຕໍ່ ວິທະຍາໄລເຕັກນິກ-ວິຊາຊີບ ຫຼວງພະບາງ ເຊິ່ງເປັນສະຖາບັນຫຼັກໃນການຜະລິດນັກວິຊາການໃນເຂດພາກເໜືອ. ພາຍຫຼັງການລະບາດຂອງພະຍາດໂຄວິດ-19 ສະຖິຕິນັກສຶກສາໃໝ່ໄດ້ຫຼຸດລົງຢ່າງເຫັນໄດ້ຊັດ ຈາກ 1,468 ຄົນ ໃນສົກຮຽນ 2021-2022 ມາເປັນພຽງ 621 ຄົນ ໃນສົກຮຽນ 2023-2024 ການຫຼຸດລົງນີ້ ສົ່ງຜົນກະທົບຕໍ່ຄວາມໝັ້ນຄົງຂອງສະຖາບັນ ໃນດ້ານລາຍຮັບງົບປະມານການບໍລິຫານ, ສາຂາວິຊາບໍ່ມີນັກຮຽນ, ແລະ ອາດນຳໄປສູ່ພາວະຂາດແຄນແຮງງານທີ່ມີຄຸນນະພາບ ເຊິ່ງຈະກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມໃນໄລຍະຍາວ (ວິທະຍາໄລເຕັກນິກ-ວິຊາຊີບຫຼວງພະບາງ, 2025)

ຈາກບັນຫາຈຳນວນນັກສຶກສາທີ່ຫຼຸດລົງ ແລະ ປັດໄຈແວດລ້ອມທີ່ກ່າວມາຂ້າງເທິງ, ຜູ້ຄົ້ນຄວ້າຈຶ່ງມີຄວາມສົນໃຈສຶກສາ "ສະພາບການຕັດສິນໃຈເຂົ້າຮຽນທີ່ ວິທະຍາໄລເຕັກນິກ-ວິຊາຊີບ ຫຼວງພະບາງ" ເພື່ອທຳຄວາມເຂົ້າໃຈເຖິງແຮງຈູງໃຈ, ຄວາມຕ້ອງການ ແລະ ອຸປະສັກທີ່ແທ້ຈິງຂອງຜູ້ຮຽນໃນຍຸກປັດຈຸບັນ. ຜົນຂອງການສຶກສາຄັ້ງນີ້ ຈະເປັນຂໍ້ມູນສຳຄັນໃຫ້ແກ່ຄະນະບໍລິຫານຂອງວິທະຍາໄລ ໃນການວາງແຜນຍຸດທະສາດການຕະຫຼາດສະຖາບັນ, ປັບປຸງຫຼັກສູດ ແລະ ພັດທະນາຮູບແບບການບໍລິການໃຫ້ສອດຄ່ອງ, ແນໃສ່ການດຶງດູດນັກສຶກສາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານອາຊີວະສຶກສາຢ່າງຍືນຍົງ.ໃນປັດຈຸບັນ.

## 2. ອຸປະກອນ ແລະ ວິທີການ

### 2.1 ປະຊາກອນ ແລະ ກຸ່ມຕົວຢ່າງ

#### 2.1.1 ປະຊາກອນ

ເພື່ອໃຫ້ສອດຄ່ອງ ແລະ ສະດວກໃນການທົດລອງໃນຄັ້ງນີ້ ຜູ້ວິໄຈໄດ້ເລືອກເປັນກຸ່ມເປົ້າໝາຍແບບງ່າຍດາຍ (ວັດທະນາວົງ, 2015) ໂດຍຄັດເລືອກເອົານັກສຶກສາປີທີ 1-3 ຈຳນວນ 621 ຄົນ, ຍິງ 144 ຄົນ ທີ່ກຳລັງສຶກສາຢູ່ທີ່ ວິທະຍາໄລ ເຕັກນິກ-ວິຊາຊີບ ຫຼວງພະບາງ, ສົກຮຽນ 2025-2026 ໃນ 5 ພາກວິຊາ.

#### 2.1.2 ກຸ່ມຕົວຢ່າງ

ຜູ້ວິໄຈໄດ້ກຳນົດຂະໜາດຂອງກຸ່ມຕົວຢ່າງ ໂດຍນຳໃຊ້ສູດຄຳນວນ (Yamane, 1967) ທີ່ລະດັບຄວາມເຊື່ອໝັ້ນ 95% ແລະ ຄ່າຄວາມຄາດເຄື່ອນທີ່ 0.05 (e = 0.05), ເຊິ່ງໄດ້ຂະໜາດກຸ່ມຕົວຢ່າງທັງໝົດ 243 ຄົນ. ຈາກນັ້ນ, ຜູ້ວິໄຈໄດ້ນຳໃຊ້ວິທີການສຸ່ມຕົວຢ່າງແບບແບ່ງຊັ້ນ (Stratified Random Sampling) ເພື່ອຄຳນວນຫາສັດສ່ວນຂອງກຸ່ມຕົວຢ່າງໃນແຕ່ລະພາກວິຊາໃຫ້ເໝາະສົມກັບຈຳນວນປະຊາກອນຕົວຈິງ ດັ່ງສະແດງໃນຕາຕະລາງ 1 ລຸ່ມນີ້:

ສູດ Taro Yamane ສູດຄຳນວນ:

$$n = \frac{N}{1 + Ne^2}$$

- n = ຂະໜາດຂອງກຸ່ມຕົວຢ່າງ
- N = ຈຳນວນປະຊາກອນທັງໝົດ (621 ຄົນ)
- e = ຄ່າຄວາມຄາດເຄື່ອນທີ່ຍອມຮັບໄດ້ (0.05)

### 2.2 ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ

ໃນການສຶກສາຄັ້ງນີ້ ໃຊ້ວິທີການສຳຫຼວດ (Survey Research) ຜູ້ສຶກສາໄດ້ໃຊ້ເຄື່ອງມືແມ່ນ: ແບບສອບຖາມ ເຊິ່ງມີລາຍລະອຽດຄືດັ່ງນີ້:

ແບບສອບຖາມທີ່ໃຊ້ໃນການສຶກສາຄັ້ງນີ້ ປະກອບດ້ວຍ 2 ຕອນຄື:

ຕອນທີ 1: ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ. ມີລັກສະນະເປັນແບບສຳຫຼວດລາຍການ (Checklist) ແລະ ຄຳຖາມປາຍເປີດ ປະກອບດ້ວຍ: ເພດ, ອາຍຸ, ສາຂາວິຊາ, ພູມລຳເນົາ, ຜົນການຮຽນ, ລະດັບຄວາມຕັ້ງໃຈ, ທຶນການສຶກສາ, ຄ່າໃຊ້ຈ່າຍ, ລາຍໄດ້ຂອງຕົນເອງ ແລະ ຜູ້ປົກຄອງ, ລວມເຖິງລະດັບການສຶກສາ ແລະ ອາຊີບຂອງຜູ້ປົກຄອງ.

ຕອນທີ 2: ສະພາບການຕັດສິນໃຈເຂົ້າຮຽນ. ເປັນແບບສອບຖາມມາດຕາສ່ວນປະມານຄ່າ (Likert Scale) 5 ລະດັບ (ຫຼາຍທີ່ສຸດ ຫາ ໜ້ອຍທີ່ສຸດ) ຄອບຄຸມ 4 ດ້ານ ຄື: ດ້ານແຮງຈູງໃຈ, ດ້ານພາບພົດສະຖາບັນ, ດ້ານຄວາມສາມາດສ່ວນບຸກຄົນ, ແລະ ດ້ານເສດຖະກິດຄອບຄົວ

ນຳແບບສອບຖາມໄປປັບປຸງແກ້ໄຂຕາມຄຳແນະນຳຂອງອາຈານທີ່ປຶກສາໃຫ້ສົມບູນ ແລະ ນຳໄປທົດລອງໃຊ້ກັບກຸ່ມທີ່ມີລັກສະນະໃກ້ຄຽງກັບກຸ່ມຕົວຢ່າງຈຳນວນ 30 ຄົນ ໂດຍໄດ້ຄ່າຄວາມເຊື່ອໝັ້ນ (Cronbach's Coefficient Alpha) ຢູ່ທີ 0.97 ($\alpha = 0.97$), ພາຍຫຼັງປັບປຸງຕາມຄຳແນະນຳຂອງຜູ້ຊ່ຽວຊານ, ເຄື່ອງມືທັງໝົດມີຄຸນນະພາບຢູ່ໃນເກນມາດຕະຖານ ແລະ ໄດ້ນຳໄປໃຊ້ເກັບຂໍ້ມູນກັບກຸ່ມເປົ້າໝາຍຕົວຈິງ.

2.3 ການເກັບກຳຮວບຮວມຂໍ້ມູນ

ການສຶກສາຄັ້ງນີ້ ຜູ້ວິໄຈໄດ້ໃຊ້ແບບສອບຖາມໃນການເກັບກຳລວບລວມຂໍ້ມູນ ແຕ່ລະດ້ານທີ່ສົ່ງຜົນຕໍ່ການຕັດສິນໃຈເຂົ້າຮຽນທີ່ ວິທະຍາໄລ ເຕັກນິກ-ວິຊາຊີບ ຫຼວງພະບາງໂດຍມີດັ່ງນີ້:

- ສຳຫຼວດ ແລະ ກຳນົດກຸ່ມຕົວຢ່າງທີ່ຈະຕ້ອງເກັບກຳຂໍ້ມູນ ວາງແຜນວັນ, ເວລາ, ສະຖານທີ່ທີ່ຈະຕ້ອງເກັບລວບລວມຂໍ້ມູນ. ຜູ້ວິໄຈໄດ້ດຳເນີນການເກັບກຳຂໍ້ມູນດ້ວຍຕົນເອງ ໂດຍການອະທິບາຍຈຸດປະສົງຂອງການວິໄຈ, ວິທີການຕອບແບບສອບຖາມ ແລະ ຮັບປະກັນຄວາມລັບຂອງຂໍ້ມູນໃຫ້ແກ່ນັກສຶກສາທີ່ເປັນກຸ່ມຕົວຢ່າງທັງ 243 ຄົນ ໄດ້ເຂົ້າໃຈກ່ອນລົງມືຕອບ.
- ພາຍຫຼັງເກັບແບບສອບຖາມກັບຄືນມາ, ຜູ້ວິໄຈໄດ້ກວດສອບຄວາມສົມບູນຂອງການຕອບແບບສອບຖາມທຸກສະບັບ. ຫາກພົບສະບັບທີ່ບໍ່ສົມບູນ ຈະຖືກຄັດອອກ ແລະ ດຳເນີນການໃຫ້ໄດ້ຄົບຕາມຈຳນວນທີ່ກຳນົດໄວ້.
- ນຳເອົາແບບສອບຖາມທີ່ສົມບູນມາລົງລະຫັດ ແລະ ບັນທຶກລົງໃນໂປຣແກຣມຄອມພິວເຕີ SPSS ເພື່ອດຳເນີນການວິເຄາະທາງສະຖິຕິໃນຂັ້ນຕອນຕໍ່ໄປ.

2.4 ການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນທີ່ລວບລວມໄດ້ຈາກແບບສອບຖາມ ຜູ້ສຶກສາໄດ້ກວດສອບຄວາມຖືກຕ້ອງສົມບູນຂອງການຕອບແບບສອບຖາມ ໂດຍການໃຊ້ໂປແກຼມສຳເລັດຮູບ SPSS. 21 ເພື່ອວິເຄາະຂໍ້ມູນ ໂດຍແບ່ງອອກເປັນ 3 ສ່ວນ ຕາມລັກສະນະຂອງເຄື່ອງມື:

1. ວິເຄາະຂໍ້ມູນທົ່ວໄປ: ນຳໃຊ້ ສະຖິຕິພັນລະນາ ເພື່ອອະທິບາຍລັກສະນະພື້ນຖານຂອງກຸ່ມຕົວຢ່າງ: ຄ່າຄວາມຖີ່ (Frequency) ແລະ ຄ່າສ່ວນຮ້ອຍ (%): ໃຊ້ສຳລັບຂໍ້ມູນ ເພດ, ສາຂາວິຊາ, ອາຊີບຜູ້ປົກຄອງ ແລະ ຂໍ້ມູນອື່ນໆທີ່ມີລັກສະນະເປັນໝວດໝູ່

2. ວິເຄາະສະພາບການຕັດສິນໃຈເຂົ້າຮຽນ: ນຳໃຊ້ສະຖິຕິເພື່ອຫາລະດັບຄວາມຄິດເຫັນໃນ 4 ດ້ານ:ຄ່າສະເລ່ຍ ($\bar{X}$) ແລະ ຄ່າຜັນປ່ຽນມາດຖານ (SD): ໃຊ້ເພື່ອວັດແທກລະດັບການຕັດສິນໃຈໃນແຕ່ລະດ້ານ ແລະ ແຕ່ລະຂໍ້.

**3. ຜົນໄດ້ຮັບ**

ຜົນການສຶກສາສະພາບການຕັດສິນໃຈເຂົ້າຮຽນທີ່ ວິທະຍາໄລ ເຕັກນິກ-ວິຊາຊີບ ຫຼວງພະບາງ ພົບວ່າ: ໃນພາບລວມ ນັກສຶກສາມີລະດັບການຕັດສິນໃຈຢູ່ໃນລະດັບຫຼາຍ ( $\bar{X}$= 4.12, SD = 0.58) (ຕາຕາລາງທີ 2) ເມື່ອພິຈາລະນາເປັນລາຍດ້ານ ໂດຍຈັດລຽງຕາມຄ່າສະເລ່ຍຈາກຫຼາຍຫາໜ້ອຍ ສາມາດສະຫຼຸບໄດ້ດັ່ງນີ້:

ດ້ານທີ່ມີລະດັບການຕັດສິນໃຈຫຼາຍທີ່ສຸດ ແມ່ນດ້ານແຮງຈູງໃຈໃນການເລືອກຮຽນ ໂດຍມີຄ່າສະເລ່ຍສູງສຸດ ($\bar{X}$= 4.35, SD = 0.65). (ຕາຕາລາງທີ 3) ສະທ້ອນໃຫ້ເຫັນວ່າ ຄວາມສົນໃຈສ່ວນຕົວ, ຄວາມມຸ່ງຫວັງດ້ານອາຊີບ ແລະ ຄວາມຕ້ອງການພັດທະນາທັກສະ ເປັນເຫດຜົນຫຼັກໃນການຕັດສິນໃຈເພື່ອເຂົ້າຮຽນທີ່ ວິທະຍາໄລ ເຕັກນິກ-ວິຊາຊີບ ຫຼວງພະບາງ

ດ້ານທີ່ມີລະດັບການຕັດສິນໃຈຫຼາຍຮອງລົງມາ ແມ່ນ ດ້ານພາບພົດ ແລະ ຄວາມເຊື່ອຖືຂອງສະຖາບັນ ໂດຍ

ມີຄ່າສະເລ່ຍ ($\bar{X}$=4.18, SD = 0.60) (ຕາຕາລາງທີ 4) ຊີ້ໃຫ້ເຫັນວ່າ ຊື່ສຽງ ແລະ ການຮັບຮອງຈາກພາກລັດມີອິດທິພົນສູງ ຕໍ່ການຕັດສິນໃຈຂອງນັກສຶກສາ ໃນການເລືອກສະຖາບັນການສຶກສາເພື່ອຮຽນຕໍ່ວິຊາຊີບຂອງຕົນເອງ.

ດ້ານທີ່ມີການຕັດສິນໃຈຫຼາຍອີກດ້ານໜຶ່ງຄື ດ້ານຄວາມສາມາດສ່ວນບຸກຄົນ ໂດຍມີຄ່າສະເລ່ຍ ($\bar{X}$= 4.15, SD = 0.51) (ຕາຕາລາງທີ 5) ສະແດງໃຫ້ເຫັນເຖິງ ນັກສຶກສາມີການພິຈາລະນາຄວາມຖະນັດຂອງຕົນເອງເປັນຢ່າງດີໃນການເລືອກສາຂາວິຊາ ແລະ ສະຖາບັນຮຽນ

ສຸດທ້າຍຄື ດ້ານສະພາບເສດຖະກິດຄອບຄົວ ທີ່ມີການຕັດສິນໃຈໃນລະດັບຫຼາຍເຊັ່ນກັນ ໂດຍມີຄ່າສະເລ່ຍ ($\bar{X}$= 4.15, SD = 0.66) (ຕາຕາລາງທີ 6) ສະທ້ອນເຖິງບັນຫາເສດຖະກິດທີ່ມີອິດທິພົນສູງໃນການເຮັດໃຫ້ນັກສຶກສາຕັດສິນໃຈເຂົ້າຮຽນ ໂດຍມີຄວາມຄາດຫວັງລາຍຮັບ ແລະ ສະພາບສັງຄົມທີ່ດີພາຍຫຼັງຮຽນຈົບ

ນອກຈາກນີ້ ຂໍ້ມູນຈາກການສໍາພາດຍັງໃຫ້ຮູ້ເຖິງປັດໄຈອື່ນໆອີກຈໍານວນໜຶ່ງທີ່ຜູ້ຕອບສໍາພາດໃຫ້ທັດສະນະໄປໃນທິດທາງດຽວກັນວ່າຈະສາມາດດຶງດູດຜູ້ຮຽນໃຫ້ເຂົ້າມາຮຽນໃນສະຖາບັນໄດ້ຄື: ດ້ານຄວາມຕ້ອງການຕະຫຼາດແຮງງານ ທີ່ນັກສຶກສາເນັ້ນໂອກາດການຈ້າງງານໃນອະນາຄົດ; ຄວາມສອດຄ່ອງຂອງຫຼັກສູດທີ່ມີຄວາມເໝາະສົມກັບກຸ່ມນັກສຶກສາທັງໄລຍະເວລາ ແລະ ເນື້ອໃນ ທີ່ສາມາດຕອບສະໜອງຄວາມຕ້ອງການຂອງຜູ້ຮຽນໄດ້ດີ; ດ້ານນະໂຍບາຍການສຶກສາມີບົດບາດໃນການສະໜັບສະໜູນການຕັດສິນໃຈ; ແລະ ນອກຈາກນີ້ຍັງມີດ້ານອິດທິພົນຂອງສັງຄົມ ແລະ ວັດທະນະທໍານໍາອີກ.

## 4. ວິພາກ

ສະພາບການຕັດສິນໃຈເລືອກເຂົ້າຮຽນທີ່ ວິທະຍາໄລເຕັກນິກ-ວິຊາຊີບ ຫຼວງພະບາງ ພົບວ່າ ນັກສຶກສາໃຫ້ຄວາມສໍາຄັນຕໍ່ດ້ານຕ່າງໆໃນລະດັບ "ຫຼາຍ" ເຊິ່ງສະທ້ອນໃຫ້ເຫັນວ່າ ການຕັດສິນໃຈເຂົ້າຮຽນສາຍອາຊີວະສຶກສາໃນປັດຈຸບັນບໍ່ໄດ້ເກີດຈາກດ້ານໃດໜຶ່ງພຽງຢ່າງດຽວ ແຕ່ເປັນການຕັດສິນໃຈຢ່າງມີລະບົບທີ່ຜ່ານການປະເມີນທັງ "ດ້ານພາຍໃນຕົວບຸກຄົນ" (ແຮງຈູງໃຈ ແລະ ຄວາມມັກ) ແລະ "ດ້ານສະພາບແວດລ້ອມພາຍນອກ" (ພາບພົດສະຖາບັນ ແລະ ຄວາມຕ້ອງການຂອງຕະຫຼາດແຮງງານ). ປະເດັນທີ່ໂດດເດັ່ນທີ່ສຸດແມ່ນ ດ້ານແຮງຈູງໃຈສ່ວນຕົວ ທີ່ນໍາໜ້າປັດໄຈດ້ານອື່ນໆ, ເຊິ່ງສະແດງໃຫ້ເຫັນເຖິງການປ່ຽນແປງຂອງຄ່ານິຍົມທີ່ຫັນມາເນັ້ນທັກສະວິຊາຊີບເພື່ອການມີວຽກເຮັດງານທໍາທີ່ໝັ້ນຄົງ. ເຊິ່ງໃນ ດ້ານແຮງຈູງໃຈ ແລະ ຄວາມຄາດຫວັງສ່ວນບຸກຄົນຜົນການວິໄຈພົບວ່າ ດ້ານແຮງຈູງໃຈມີຄ່າສະເລ່ຍສູງສຸດ, ເຊິ່ງຊີ້ໃຫ້ເຫັນວ່າຜູ້ຮຽນໃຫ້ຄວາມສໍາຄັນກັບຄວາມມຸ່ງຫວັງດ້ານອາຊີບ ແລະ ການພັດທະນາທັກສະ. ຜົນການວິໄຈຄັ້ງນີ້ສອດຄ່ອງກັບທິດສະດີຂອງ Kotler & Fox (1995) ທີ່ລະບຸວ່າ ຂະບວນການຕັດສິນໃຈຂອງຜູ້ຮຽນເລີ່ມຕົ້ນຈາກ "ການຮັບຮູ້ບັນຫາ" ຫຼື ຄວາມຕ້ອງການພັດທະນາຕົນເອງເພື່ອໂອກາດໃນອະນາຄົດ. ນອກຈາກນີ້, ຍັງສອດຄ່ອງກັບບົດວິໄຈຂອງ PheangKhamsone, (2025) ທີ່ພົບວ່າ ລະດັບການຕັດສິນໃຈຂອງນັກສຶກສາທີ່ເລືອກຮຽນຕໍ່ໃນວິທະຍາໄລວິຈິດສິນພື້ນເມືອງ ຫຼວງພະບາງ ໂດຍລວມແລ້ວ ແມ່ນຢູ່ໃນລະດັບຫຼາຍ ເຊັ່ນ: ດ້ານການເງິນ, ດ້ານສະຖາບັນການສຶກສາ, ດ້ານບຸກຄົນ, ດ້ານຫຼັກສູດ, ດ້ານບັນຍາກາດ-ສິ່ງແວດລ້ອມ ແລະ ດ້ານຄອບຄົວ. ອັນນີ້ຢືນຢັນໄດ້ວ່າ ຊື່ສຽງ ແລະ ຄຸນນະພາບການສອນຂອງວິທະຍາໄລເຕັກນິກ-ວິຊາຊີບ ຫຼວງພະບາງ ແມ່ນປັດໄຈດຶງດູດທີ່ສໍາຄັນ. ເຊິ່ງສອດຄ່ອງກັບແນວຄິດ "Physical Evidence" ແລະ "Product" ໃນສ່ວນປະສົມການຕະຫຼາດການສຶກສາຂອງ Kotler & Fox (1995) ທີ່ເນັ້ນວ່າ ພາບລັກທີ່ດີ ແລະ ສິ່ງອໍານວຍຄວາມສະດວກທີ່ທັນສະໄໝ ຈະຊ່ວຍສ້າງຄວາມໝັ້ນໃຈໃຫ້ແກ່ຜູ້ຮັບບໍລິການ. ນອກຈາກນີ້, ຜົນວິໄຈນີ້ຍັງໄປໃນທິດທາງດຽວກັນກັບ Mustafa et al. (2020) ຍັງໄດ້ສະເໜີວ່າ ໃນຍຸກຂໍ້ມູນຂ່າວສານ, ພາບພົດທີ່ດີຂອງສະຖາບັນທີ່ປາກົດໃນສື່ສັງຄົມອອນລາຍ ມີຜົນໂດຍກົງຕໍ່ການສ້າງຄວາມເຊື່ອໝັ້ນ ແລະ ການຕັດສິນໃຈສະໝັກເຂົ້າຮຽນຂອງໄວໜຸ່ມ. ທີ່ສາມາດເວົ້າໄດ້ວ່າ ພາບພົດຂອງສະຖາບັນແມ່ນຕົວປ່ຽນສໍາຄັນທີ່ມີອິດທິພົນຕໍ່ການເລືອກສະຖານສຶກສາໃນແຂວງຫຼວງພະບາງເຊັ່ນກັນ ແລະ ດ້ານສະພາບເສດຖະກິດ-ສັງຄົມ ແລະ ຕະຫຼາດແຮງງານການທີ່ນັກສຶກສາໃຫ້ຄວາມສໍາຄັນຕໍ່ດ້ານຕະຫຼາດແຮງງານ ສະທ້ອນໃຫ້ເຫັນເຖິງທັດສະນະຄະຕິແບບຄວາມເປັນຈິງ. ຂໍ້ມູນນີ້ສອດຄ່ອງກັບ ແຜນພັດທະນາຂະແໜງການສຶກສາ ແລະ ກິລາ (2021-2025) ຂອງກະຊວງສຶກສາທິການ ແລະ ກິລາ ທີ່ເນັ້ນໜັກວ່າ ການຂະຫຍາຍຕົວຂອງໂຄງການພັດທະນາອຸດສາຫະກໍາ ແລະ ວິສາຫະກິດໃນລາວ ເປັນປັດໄຈຍູ້ດັນໃຫ້ຄົນລຸ້ນໃໝ່ຫັນມາສົນໃຈສາຍອາຊີວະສຶກສາຫຼາຍຂຶ້ນ ເພື່ອຕອບສະໜອງຄວາມຕ້ອງການແຮງງານສີມື ແລະ ເຊິ່ງສອດຄ່ອງກັບແນວຄິດຂອງ Ahmad et al. (2023) ທີ່ວ່າ ນັກສຶກສາໃນ

ປະເທດທີ່ກຳລັງພັດທະນາຈະໃຊ້ "ການວິເຄາະຄວາມຄຸ້ມຄ່າ" ໂດຍເບິ່ງວ່າການຮຽນວິຊາຊີບແມ່ນທາງເລືອກທີ່ຊ່ວຍໃຫ້ເຂົ້າສູ່ຕະຫຼາດແຮງງານໄດ້ໄວ ແລະ ມີລາຍໄດ້ທີ່ໝັ້ນຄົງ ແລະ ດ້ານອິດທິພົນຂອງສັງຄົມ ແລະ ວັດທະນະທຳເຖິງວ່າດ້ານອິດທິພົນຂອງສັງຄົມ ແລະ ຜູ້ປົກຄອງຈະມີຄ່າສະເລ່ຍຕ່ຳກວ່າດ້ານອື່ນໆ, ແຕ່ກໍຍັງຢູ່ໃນລະດັບຫຼາຍ. ສິ່ງນີ້ສະແດງໃຫ້ເຫັນວ່າ ໃນບໍລິບົດຂອງສັງຄົມລາວ, ການຕັດສິນໃຈຂອງນັກຮຽນຍັງໄດ້ຮັບການສະໜັບສະໜູນ ຫຼື ຜ່ານການປຶກສາຫາລືກັບຄອບຄົວ ແລະ ສື່ສັງຄົມ. ອັນນີ້ສະແດງໃຫ້ເຫັນວ່າແມ້ວ່ານັກສຶກສາຈະພຶງພໍໃຈໃນລະດັບຫຼາຍ, ແຕ່ໃນລາຍລະອຽດຕົວຈິງແລ້ວ ວິທະຍາໄລຍັງຕ້ອງໄດ້ພັດທະນາຫ້ອງປະຕິບັດການໃຫ້ສອດຄ່ອງກັບເຕັກໂນໂລຊີປັດຈຸບັນ. ຂໍ້ສະຫຼຸບຂອງການວິພາກຜົນໂດຍລວມແລ້ວ, ສະພາບການຕັດສິນໃຈເຂົ້າຮຽນຂອງນັກສຶກສາແມ່ນເກີດຈາກ "ປັດໄຈພາຍໃນ" (ແຮງຈູງໃຈ ແລະ ຄວາມມັກ) ປະສານສົມທົບກັບ "ປັດໄຈພາຍນອກ" (ພາບພົດສະຖາບັນ ແລະ ຄວາມຕ້ອງການຂອງຕະຫຼາດແຮງງານ). ຜົນການວິໄຈຄັ້ງນີ້ຈຶ່ງເປັນການຢືນຢັນວ່າ ວິທະຍາໄລ ເຕັກນິກ-ວິຊາຊີບ ຫຼວງພະບາງ ມີຄວາມພ້ອມ ແລະ ສອດຄ່ອງກັບຄວາມຕ້ອງການຂອງຜູ້ຮຽນ ແລະ ສັງຄົມໃນປັດຈຸບັນ. ນອກຈາກນີ້, Tran (2021) ຍັງໄດ້ຊີ້ໃຫ້ເຫັນວ່າ ໃນການສຶກສາສາຍອາຊີວະ, "ສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການຝຶກປະຕິບັດຕົວຈິງ" (Practical Learning Environment) ແມ່ນປັດໄຈສຳຄັນທີ່ນັກສຶກສາໃຊ້ໃນການປຽບທຽບກ່ອນການຕັດສິນໃຈເຂົ້າຮຽນ.

## 5. ສະຫຼຸບ

ຜົນການວິໄຈຜົນການສຶກສາສະພາບການຕັດສິນໃຈເຂົ້າຮຽນທີ່ ວິທະຍາໄລ ເຕັກນິກ-ວິຊາຊີບ ຫຼວງພະບາງ ສົກສຶກສາ 2025-2026 ສາມາດສະຫຼຸບໄດ້ດັ່ງນີ້:

ພາບລວມຂອງການຕັດສິນໃຈ ເຫັນວ່າ ນັກສຶກສາມີລະດັບການຕັດສິນໃຈເຂົ້າຮຽນໃນພາບລວມຢູ່ໃນລະດັບຫຼາຍ. ສິ່ງນີ້ສະທ້ອນໃຫ້ເຫັນວ່າ ວິທະຍາໄລ ເຕັກນິກ-ວິຊາຊີບ ຫຼວງພະບາງ ຍັງຄົງເປັນສະຖາບັນທີ່ໄດ້ຮັບຄວາມສົນໃຈ ແລະ ເປັນທາງເລືອກຫຼັກຂອງນັກສຶກສາໃນການສຶກສາຕໍ່ສາຍອາຊີບ.

ດ້ານທີ່ມີຄວາມສຳຄັນໂດດເດັ່ນແມ່ນ ດ້ານແຮງຈູງໃຈໃນການເລືອກຮຽນ. ອັນນີ້ສະແດງໃຫ້ເຫັນວ່າ ນັກສຶກສາທີ່ເຂົ້າຮຽນສ່ວນໃຫຍ່ມີຄວາມຕັ້ງໃຈ ແລະ ເປົ້າໝາຍທີ່ຊັດເຈນໃນການພັດທະນາທັກສະວິຊາຊີບເພື່ອອະນາຄົດຂອງຕົນເອງ, ເຊິ່ງເປັນປັດໄຈພາຍໃນທີ່ເຂັ້ມແຂງກວ່າປັດໄຈພາຍນອກອື່ນໆ ແລະ ດ້ານທີ່ມີຄວາມສຳຄັນຮອງລົງມາແມ່ນດ້ານພາບພົດ ແລະ ຄວາມເຊື່ອຖືຂອງສະຖາບັນ, ດ້ານຄວາມສາມາດສ່ວນບຸກຄົນ ລ້ວນແຕ່ມີຜົນຕໍ່ການຕັດສິນໃຈໃນລະດັບທີ່ສູງ. ສິ່ງນີ້ຊີ້ໃຫ້ເຫັນວ່າ ຊື່ສຽງຂອງວິທະຍາໄລ, ການຮັບຮອງມາດຕະຖານຈາກພາກລັດ,

ນອກຈາກນີ້ກໍ່ຍັງມີປັດໄຈອື່ນໆອີກທີ່ມີອິດທິພົນຕໍ່ການຕັດສິນໃຈເຂົ້າຮຽນຂອງນັກສຶກສາ ເປັນຕົ້ນແມ່ນຄວາມຖະນັດຂອງຕົວຜູ້ຮຽນເອງ ແລະ ຄຸນນະພາບຂອງຫຼັກສູດ ດ້ານອິດທິພົນຂອງສັງຄົມ ແລະ ວັດທະນະທຳ ລວມທັງ ດ້ານນະໂຍບາຍສົ່ງເສີມການສຶກສາຂອງພາກລັດ, ສິ່ງເຫຼົ່ານີ້ຍັງຄົງມີບົດບາດໃນການສະໜັບສະໜູນການຕັດສິນໃຈຢູ່ໃນລະດັບຫຼາຍ, ເຊິ່ງສະແດງວ່າ ຄ່ານິຍົມຂອງສັງຄົມ ແລະ ນະໂຍບາຍສົ່ງເສີມການສຶກສາສາຍອາຊີບກໍຍັງມີສ່ວນຊ່ວຍໃນການຊຸກຍູ້ໃຫ້ນັກສຶກສາເລືອກເຂົ້າຮຽນໃນສະຖາບັນແຫ່ງນີ້.

5.2. ຂໍ້ສະເໜີແນະ

5.2.1. ຂໍ້ສະເໜີແນະໃນການນຳໄປໃຊ້

ຜູ້ວິໄຈມີຂໍ້ສະເໜີແນະເພື່ອພັດທະນາການດຶງດູດນັກສຶກສາ ດັ່ງນີ້:

ການສົ່ງເສີມພາບພົດ ແລະ ການປະຊາສຳພັນ: ວິທະຍາໄລຄວນເພີ່ມທະວີການນຳໃຊ້ສື່ສັງຄົມອອນລາຍເພື່ອເຜີຍແຜ່ຜົນງານ ແລະ ຄວາມພ້ອມຂອງສະຖາບັນ. ຄວນເນັ້ນການນຳສະເໜີ "ເລື່ອງລາວຄວາມສຳເລັດ" ຂອງນັກສຶກສາເກົ່າ ເພື່ອສ້າງແຮງຈູງໃຈໃຫ້ແກ່ນັກຮຽນລຸ້ນໃໝ່.

ການພັດທະນາພື້ນຖານໂຄງລ່າງ: ຄວນສືບຕໍ່ລົງທຶນໃນດ້ານອຸປະກອນການຮຽນ-ການສອນ ແລະ ຫ້ອງທົດລອງທັນສະໄໝ ສອດຄ່ອງກັບເຕັກໂນໂລຊີຕົວຈິງໃນຕະຫຼາດແຮງງານເນື່ອງຈາກນັກສຶກສາຕ້ອງການສິ່ງອຳນວຍຄວາມສະດວກທີ່ຈັບຕ້ອງໄດ້.

ການເຊື່ອມໂຍງກັບຕະຫຼາດແຮງງານ: ວິທະຍາໄລຄວນສ້າງເຄືອຂ່າຍຮ່ວມກັບພາກທຸລະກິດ ແລະ ອຸດສາຫະກຳໃຫ້ແໜ້ນແຟ້ນ ເພື່ອຮັບປະກັນວ່າຫຼັກສູດມີຄວາມສອດຄ່ອງ ແລະ ນັກສຶກສາທີ່ຈົບໄປມີບ່ອນຮອງຮັບວຽກເຮັດງານທຳທີ່ຊັດເຈນ.

5.2.2. ຂໍ້ສະເໜີແນະສຳລັບການຄົ້ນຄວ້າໃນອະນາຄົດ

- ຄວນມີການສຶກສາແບບຄຸນນະພາບແບບການສຳພາດເຈາະເລິກ ກັບນັກສຶກສາ ເພື່ອໃຫ້ໄດ້ຂໍ້ມູນໃນ

ເລີກເຊິ່ງກ່ຽວກັບປັດໄຈທາງຈິດຕະວິທະຍາ ແລະ ສັງຄົມ ທີ່ມີຜົນຕໍ່ການເລືອກຮຽນສາຍອາຊີວະ.

- ຄວນມີການສຶກສາປຽບທຽບປັດໄຈການຕັດສິນໃຈເຂົ້າຮຽນ ລະຫວ່າງ ວິທະຍາໄລເຕັກນິກຂອງລັດ ແລະ ເອກະຊົນ ເພື່ອໃຫ້ເຫັນຄວາມແຕກຕ່າງຂອງຄວາມຕ້ອງການໃນແຕ່ລະບໍລິບົດ.
- ຄວນມີການສຶກສາຜົນກະທົບໄລຍະຍາວໂດຍມີການຕິດຕາມຜົນ ກ່ຽວກັບຄວາມພໍໃຈຫຼັງການເຂົ້າຮຽນ ແລະ ຄວາມສອດຄ່ອງຂອງທັກສະທີ່ໄດ້ຮັບ ກັບການປະກອບອາຊີບຕົວຈິງ ເພື່ອນໍາມາປັບປຸງຍຸດທະສາດການຕະຫຼາດການສຶກສາໃຫ້ມີປະສິດທິຜົນຍິ່ງຂຶ້ນ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ: ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອຜົນປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບແບບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2020). *ແຜນຍຸດທະສາດການພັດທະນາການສຶກສາ ປະຈໍາປີ 2020-2030.* ລັດວິສາຫະກິດໂຮງພິມສຶກສາ.

ກົມການສຶກສາຊັ້ນສູງ. (2020). *ແຜນຍຸດທະສາດການພັດທະນາວິທະຍາໄລແຕ່ 2020 ຫາ 2025.* ກົມການສຶກສາຊັ້ນສູງ.

ກົມອາຊີວະສຶກສາ. (2021). *ກ່ຽວກັບຄວາມຈໍາເປັນໃນການສ້າງກໍາລັງແຮງງານເພື່ອຮອງຮັບໂຄງການຍຸດທະສາດຕາມແຜນພັດທະນາການສຶກສາລາວ.* ກົມອາຊີວະສຶກສາ.

ວິທະຍາໄລເຕັກນິກ-ວິຊາຊີບຫຼວງພະບາງ. (2025). *ບົດລາຍງານຜົນການປະຕິບັດວຽກງານພາຍໃນຊຸມປີ 2020-2025.* ວິທະຍາໄລເຕັກນິກ-ວິຊາຊີບຫຼວງພະບາງ.

ວັດທະນາວົງ, ທ. (2015). *ລະບຽບວິໄຈທາງການສຶກສາ.* ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ.

PheangKhamsone, P., Somsamone, V., Sifongxay, S. (2025). Factors Influencing on Students' Decisions to Study at Luang Prabang Traditional Arts College. *Souphanouvong University Journal Multidisciplinary Research and Development*, *11*(03), 156–163. https://doi.org/10.69692/SUJMRD110315 6Kotler, P., & Fox, K. (1995). *Strategic Marketing for Educational Institutions (2nd ed.).* Prentice-Hall.

Marginson, S. (2019). Limitations of human capital theory. *Higher Education, 77*(2), 287-301. doi:10.1007/s10734-018-0235-x

Pongsitong, S. (2005). *Factors influencing the decision to pursue further education in vocational education institutions .* Srinakharinwirot University Repository.

Tran, L. (2021). *The Importance of Facilities in Vocational Education Decision-Making.* Elsevier.

UNESCO. (2022). *Strategy for Technical and Vocational Education and Training (TVET) 2022-2029:Transforming TVET for successful and just transitions.* UNESCO Publishing.

Yamane, T. (1967). *Statistics: An Introductory Analysis (2nd ed.).* New York: Harper and Row.

ຕາຕະລາງ 1: ກຸ່ມຕົວຢ່າງຂອງທຸກໆ ພາກວິຊາໃນວິທະຍາໄລ ເຕັກນິກ-ວິຊາຊີບ ຫຼວງພະບາງ ສົກສຶກສາ 2025 - 2026.

| ລ/ດ | ພາກວິຊາ | ປະຊາກອນ (ຄົນ) | | ກຸ່ມຕົວຢ່າງ(ຄົນ) | |
|---|---|---|---|---|---|
| | | ລວມ | ຍິງ | ລວມ | ຍິງ |
| 1 | ບໍລິຫານທຸລະກິດ ແລະ ໄອທີ | 84 | 50 | 33 | 20 |
| 2 | ບໍລິຫານໂຮງແຮມ ແລະ ການທ່ອງທ່ຽວ | 99 | 91 | 39 | 36 |
| 3 | ອຸດສາຫະກຳ | 253 | 1 | 99 | 1 |
| 4 | ເຕັກໂນໂລຊີໄຟຟ້າ | 175 | 2 | 68 | 1 |
| 5 | ກໍ່ສ້າງເຄຫາສະຖານ | 10 | 0 | 4 | 0 |
| | ລວມ | 621 | 144 | 243 | 58 |

ຕາຕະລາງ 2 ລະດັບຄວາມຄິດເຫັນຕໍ່ສະພາບການຕັດສິນໃຈເຂົ້າຮຽນທີ່ວິທະຍາໄລ ເຕັກນິກ-ວິຊາຊີບ ຫຼວງພະບາງ.

| ລ/ດ | ດ້ານທີ່ສຶກສາ | $\bar{X}$ | S.D | ລະດັບຄວາມຄິດເຫັນ |
|---|---|---|---|---|
| 1 | ແຮງຈູງໃຈ | 4.35 | 0.65 | ຫຼາຍທີ່ສຸດ |
| 2 | ພາບພົດ ແລະ ຄວາມເຊື່ອຖືຂອງສະຖານສຶກສາ | 4.18 | 0.60 | ຫຼາຍ |
| 3 | ຄວາມສາມາດສ່ວນບຸກຄົນ | 4.15 | 0.51 | ຫຼາຍ |
| 4 | ສະພາບເສດຖະກິດ-ສັງຄົມ | 4.15 | 0.66 | ຫຼາຍ |
| | **ສະເລ່ຍລວມ** | 4.21 | 0.07 | **ຫຼາຍ** |

ຕາຕະລາງ 3 ລະດັບຄວາມຄິດເຫັນດ້ານແຮງຈູງໃຈໃນການຕັດສິນໃຈເຂົ້າຮຽນທີ່ວິທະຍາໄລ ເຕັກນິກ-ວິຊາຊີບ ຫຼວງພະບາງ

| ລ/ດ | ດ້ານແຮງຈູງໃຈ | $\bar{X}$ | S.D | ລະດັບຄວາມຄິດເຫັນ |
|---|---|---|---|---|
| 1 | ໄດ້ຮັບອິດທິພົນຈາກຄອບຄົວ ຫຼື ໝູ່ເພື່ອນໃນການເລືອກຮຽນ | 4.16 | 0.70 | ຫຼາຍ |
| 2 | ໂອກາດດ້ານອາຊີບຫຼັງຈາກຈົບການສຶກສາເປັນປັດໃຈສຳຄັນ | 4.28 | 0.67 | ຫຼາຍທີ່ສຸດ |
| 3 | ເລືອກເຂົ້າຮຽນເນື່ອງຈາກຫຼັກສູດສອດຄ່ອງກັບຄວາມສົນໃຈ | 4.43 | 0.63 | ຫຼາຍທີ່ສຸດ |
| 4 | ເລືອກເຂົ້າຮຽນເນື່ອງຈາກຊື່ສຽງ/ຄຸນນະພາບຂອງສະຖາບັນ | 4.36 | 0.65 | ຫຼາຍທີ່ສຸດ |
| 5 | ມີແຮງຈູງໃຈສ່ວນຕົວໃນການຮຽນຮູ້ ສະເລ່ຍ | 4.52 | 0.60 | ຫຼາຍທີ່ສຸດ |
| | **ສະເລ່ຍລວມ** | **4.35** | **0.04** | **ຫຼາຍທີ່ສຸດ** |

ຕາຕະລາງ 4 ລະດັບຄວາມຄິດເຫັນຕໍ່ພາບພົດ ແລະ ຄວາມເຊື່ອຖືຂອງວິທະຍາໄລ ເຕັກນິກ-ວິຊາຊີບ ຫຼວງພະບາງ

| ລ/ດ | ດ້ານພາບພົດ ແລະ ຄວາມເຊື່ອຖືຂອງສະຖານສຶກສາ | $\bar{X}$ | S.D | ລະດັບຄວາມຄິດເຫັນ |
|---|---|---|---|---|
| 1 | ເປັນວິທະຍາໄລ ຂອງລັດທີ່ມີຊື່ສຽງມາແຕ່ຍາວນານ | 4.24 | 0.58 | ຫຼາຍ |
| 2 | ເປີດສອນຫຼາຍສາຂາວິຊາ | 4.36 | 0.54 | ຫຼາຍ |
| 3 | ມີຄວາມໂດດເດັ່ນທາງດ້ານການຮຽນ-ການສອນ | 4.19 | 0.60 | ຫຼາຍ |
| 4 | ມີຄວາມຊ່ຽວຊານທາງດ້ານວິຊາສະເພາະ | 4.15 | 0.62 | ຫຼາຍ |
| 5 | ມີຫ້ອງຮຽນ ແລະ ຫ້ອງທົດລອງທີ່ທັນສະໄໝ | 4.11 | 0.63 | ຫຼາຍ |
| 6 | ມີສະພາບແວດລ້ອມສວຍສົດງົດງາມ | 4.02 | 0.67 | ຫຼາຍ |
| 7 | ມີຄວາມສະດວກເຊັ່ນ: ການເຂົ້າເຖິງ, ທີ່ພັກອາໄສ ແລະ ອາຫານການກິນ | 4.07 | 0.64 | ຫຼາຍ |
| 8 | ເປັນວິທະຍາໄລທີ່ຈົບການສຶກສາແລ້ວໄດ້ຮັບການຍອມຮັບຈາກຕະຫຼາດແຮງງານ | 4.30 | 0.56 | ຫຼາຍ |
| | **ສະເລ່ຍລວມ** | **4.18** | **0.04** | **ຫຼາຍ** |

ຕາຕະລາງ 5 ລະດັບຄວາມຄິດເຫັນດ້ານຄວາມສາມາດສ່ວນບຸກຄົນຂອງຜູ້ຮຽນໃນການການຕັດສິນໃຈເຂົ້າຮຽນທີ່ວິທະຍາໄລ ເຕັກນິກ-ວິຊາຊີບ ຫຼວງພະບາງ

| ລ/ດ | ດ້ານຄວາມສາມາດສ່ວນບຸກຄົນ | $\bar{X}$ | S.D | ລະດັບຄວາມຄິດເຫັນ |
|---|---|---|---|---|
| 1 | ຜົນການສະເລ່ຍຕອນຈົບມັດທະຍົມຕອນຕົ້ນ ຫຼື ຕອນປາຍ | 4.01 | 0.56 | ຫຼາຍ |
| 2 | ສາຂາວິຊາຮຽນຖືກກັບຄວາມຖະນັດຂອງຕົນເອງ | 4.32 | 0.47 | ຫຼາຍທີ່ສຸດ |
| 3 | ເຊື່ອວ່າທ່ານມີຄວາມສາມາດໃນການຮຽນຮູ້ສາຂາວິຊາທີ່ເລືອກ. | 4.25 | 0.49 | ຫຼາຍທີ່ສຸດ |
| 4 | ມີທັກສະພິເສດເຊັ່ນ: ຄິດເປັນລະບົບ, ວິເຄາະ, ສ້າງສັນ ທີ່ສົ່ງເສີມການຮຽນຮູ້. | 4.12 | 0.52 | ຫຼາຍ |
| 5 | ມີຄວາມສາມາດໃນການປັບຕົນເຂົ້າກັບສະພາບແວດລ້ອມການຮຽນ. | 4.16 | 0.51 | ຫຼາຍ |
| 6 | ມີຄວາມສາມາດໃນການຄົ້ນຄວ້າ ແລະ ແກ້ໄຂບັນຫາດ້ວຍຕົນເອງ. | 4.09 | 0.53 | ຫຼາຍ |
| 7 | ມີຄວາມສາມາດໃນການສື່ສານ ແລະ ການຮ່ວມງານກັບຜູ້ອື່ນໄດ້ດີ. | 4.05 | 0.54 | ຫຼາຍ |
| 8 | ເຊື່ອວ່າຄວາມສາມາດສ່ວນບຸກຄົນຂອງທ່ານສົ່ງຜົນຕໍ່ຄວາມສຳເລັດໃນການຮຽນ ແລະ ອາຊີບ. | 4.20 | 0.50 | ຫຼາຍ |
| | **ສະເລ່ຍລວມ** | **4.15** | **0.03** | **ຫຼາຍ** |

ຕາຕະລາງ 6 ລະດັບຄວາມຄິດເຫັນດ້ານເສດຖະກິດຄອບຄົວ ຕໍ່ກັບການຕັດສິນໃຈເຂົ້າຮຽນທີ່ວິທະຍາໄລ ເຕັກນິກ-ວິຊາຊີບ ຫຼວງພະບາງ

| ລ/ດ | ດ້ານສະຖານະເສດຖະກິດຄອບຄົວ | $\bar{X}$ | S.D | ລະດັບຄວາມຄິດເຫັນ |
|---|---|---|---|---|
| 1 | ຖານະເສດຖະກິດຂອງຄອບຄົວມີສ່ວນສຳຄັນຕໍ່ການເລືອກເຂົ້າຮຽນ. | 4.20 | 0.44 | ຫຼາຍ |
| 2 | ຄວາມໝັ້ນຄົງທາງເສດຖະກິດຂອງຄອບຄົວຊ່ວຍໃຫ້ຕັດສິນໃຈເຂົ້າຮຽນ. | 4.09 | 0.49 | ຫຼາຍ |
| 3 | ເຊື່ອວ່າຖານະການເງິນຂອງຄອບຄົວມີອິດທິພົນຕໍ່ການເລືອກສາຂາການຮຽນ. | 4.15 | 0.46 | ຫຼາຍ |
| 4 | ເຫັນວ່າຖານະເສດຖະກິດຄອບຄົວມີຄວາມສຳຄັນຕໍ່ການວາງແຜນອະນາຄົດການຮຽນ. | 4.04 | 0.53 | ຫຼາຍ |
| | **ສະເລ່ຍລວມ** | **4.12** | **0.04** | **ຫຼາຍ** |